Media Release

Cambodia • Lao PDR • Thailand • Viet Nam
For sustainable development

ສາມາດອອກຂ່າວໄດ້ທັນທີ

# ແມ່ນ້ຳຂອງ ຍັງສືບຕໍ່ຂະຫຍາຍຕົວ ແຕ່ກໍ່ຍັງມີສິ່ງທ້າທາຍຫຼາຍດ້ານ: ບົດລາຍງານສະບັບໃໝ່ຂອງ ຄມສ

**ທີ່ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 7 ກັນຍາ 2023** - ຄະນະກຳມາທິການແມ່ນ້ຳຂອງສາກົນ ໄດ້ເຜີຍແຜ່ ບົດລາຍງານປະຈຳປີ 2022 ຂອງຕົນ ເຊິ່ງໄດ້ບັນທຶກ ຜົນສຳເລັດຫຼາຍດ້ານ ໃນໄລຍະປີຜ່ານມາ ແລະ ສິ່ງທ້າທາຍຕົ້ນຕໍ ທີ່ອ່າງແມ່ນ້ຳແຫ່ງນີ້ ປະສົບພົບພໍ້ຢູ່ ເຊິ່ງຕ້ອງໄດ້ຮັບການເອົາໃຈໃສ່ເປັນພິເສດ.

ບົດລາຍງານປະຈຳປີ 2022 ຂອງ ຄມສ ໄດ້ບັນທຶກ ຜົນສຳເລັດທີ່ຈັບຕ້ອງໄດ້ ໃນທົ່ວອ່າງແມ່ນ້ຳຂອງ ເຊິ່ງບັນລຸຜົນໄດ້ຈາກຄວາມພະຍາຍາມຮ່ວມກັນ ແລະ “ການຮ່ວມມືກ່ຽວກັບນ້ຳ” ຂອງບັນດາປະເທດສະມາຊິກ ກໍ່ຄື ປະເທດກຳປູເຈຍ, ປະເທດລາວ, ປະເທດໄທ ແລະ ປະເທດຫວຽດນາມ ພ້ອມທັງ ບັນດາຄູ່ຮ່ວມງານຕ່າງໆ.

ໃນບັນດາຜົນສຳເລັດທີ່ພົ້ນເດັ່ນທີ່ສຸດ ໃນປີຜ່ານມາ ກໍ່ແມ່ນ ເອກະສານຄຳແນະນຳສະບັບໃໝ່ ກ່ຽວກັບ ການອອກແບບເຂື່ອນພະລັງງານທາງນ້ຳ ແລະ ຜົນກະທົບດ້ານສິ່ງແວດລ້ອມຂ້າມຊາຍແດນ ເພື່ອຊ່ວຍໃນການອົບພະຍົບຂອງປາ ແລະ ການໄຫຼຂອງຕະກອນ; ລະບຽບການເດີນເຮືອສະບັບໃໝ່ ເພື່ອສົ່ງເສີມ ຄວາມປອດໄພທາງນ້ຳ ໃຫ້ໄດ້ດີຂຶ້ນກວ່າເກົ່າ; ເຄື່ອງມືນະວັດຕະກຳໃໝ່ ເພື່ອພະຍາກອນ ໄພນ້ຳຖ້ວມແລະໄພແຫ້ງແລ້ງ ໃຫ້ໄດ້ດີຂຶ້ນກວ່າເກົ່າ; ສະຖານນີຕິດຕາມແຫ່ງໃໝ່ ຢູ່ ທາງຕອນເໜືອຂອງອ່າງແມ່ນ້ຳຂອງຕອນລຸ່ມ ເພື່ອກວດຫາ ການປ່ຽນແປງຂອງນ້ຳ ໃຫ້ໄດ້ໄວຂຶ້ນ; ແລະ ການເປີດຕົວ ບົດສຶກສາຮ່ວມ ເຊິ່ງ ຮ່ວມກັນກັບ ອົງການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ເພື່ອສ້າງຄວາມເຂົ້າໃຈຮ່ວມກັນ ກ່ຽວກັບ ການປ່ຽນແປງຂອງຮູບແບບການໄຫຼຂອງນ້ຳ ໃນເຂດແມ່ນ້ຳຕອນເທິງ-ແມ່ນ້ຳຕອນລຸ່ມ ເຊິ່ງເຫັນໄດ້ວ່າ ມັນເປັນສິ່ງທີ່ຕ້ອງມີ ເພື່ອນຳໄປສູ່ ການຮ່ວມມືທີ່ມີປະສິດທິພາບຫຼາຍຂຶ້ນ.

ຄມສ ໄດ້ເລີ່ມຈັດຕັ້ງປະຕິບັດ ຄຳແນະນຳກ່ຽວກັບ ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ຂ້າມຊາຍແດນ ຫຼື TbEIA, ສ່ວນວ່າ ບົດສຶກສາຮ່ວມນັ້ນ ກໍ່ໄດ້ສຳເລັດໄລຍະທີໜຶ່ງແລ້ວ. ຜົນໄດ້ຮັບຈາກການສຶກສາຄັ້ງນີ້ ຈະໄດ້ເຜີຍແຜ່ໃນ ເວທີປະຊຸມລະດັບພາກພື້ນ ກັບພາກສ່ວນກ່ຽວຂ້ອງ ຄັ້ງທີ 13 ເຊິ່ງຈະຈັດຂຶ້ນໃນວັນທີ 5 ຕຸລາ 2023 ທີ່ແຂວງຫຼວງພະບາງ, ສປປ ລາວ.

ນອກຈາກນັ້ນ, ເນື່ອງຈາກວ່າ ຄມສ ພະຍາຍາມປະຕິບັດຕາມ ຍຸດທະສາດພັດທະນາອ່າງນ້ຳ ສຳລັບປີ 2021–2030 ແລະແຜນຍຸດທະສາດ ສຳລັບປີ 2021–2025 ຂອງຕົນນັ້ນ, ບົດລາຍງານປະຈຳປີສະບັບນີ້ ກໍ່ໄດ້ອະທິບາຍເຖິງວ່າ 5 ບຸລິມະສິດຍຸດທະສາດ ຂອງອົງການນີ້ ກໍ່ຄື: ສິ່ງແວດລ້ອມ, ສັງຄົມ, ເສດຖະກິດ, ການປ່ຽນແປງສະພາບອາກາດ ແລະ ການຮ່ວມມືນັ້ນເກີດປະໂຫຍດຄືແນວໃດ ບໍ່ສະເພາະແຕ່ ຕໍ່ກັບ ຜູ້ທີ່ອາໃສແມ່ນ້ຳຂອງຫຼາຍລ້ານຄົນ ເທົ່ານັ້ນ ແຕ່ຍັງໄດ້ປະກອບສ່ວນໃຫ້ບັນລຸ 10 ເປົ້າໝາຍ ໃນຈຳນວນ 17 “ເປົ້າໝາຍຂອງການພັດທະນາຢ່າງຍືນຍົງ” ຂອງປະຊາຄົມໂລກ.

ເຖິງຢ່າງໃດກໍ່ຕາມ, ນອກຈາກຂ່າວດີ ໃນວັນນີ້ ເຊິ່ງປະກອບດ້ວຍ ປະລິມານນ້ຳຝົນ ທີ່ສູງຂຶ້ນ 40% ທຽບກັບປີ 2021 ແລະປີ 2022; ຄຸນນະພາບນ້ຳ ລຽບຕາມລຳແມ່ນ້ຳຂອງ ທີ່ຍັງຄົງຢູ່ໃນລະດັບ “ດີ” ຫຼື “ດີເລີດ” ໃນເກືອບທຸກສະຖານທີ່ຕິດຕາມ;

ແລະ ການຂະຫຍາຍຕົວທາງເສດຖະກິດ-ສັງຄົມ ແລະ ມາດຕະຖານການດຳລົງຊີວິດ ທີ່ດີຂຶ້ນກວ່າເກົ່າ ໃນທົ່ວທັງພາກພື້ນນີ້, ແຕ່ວ່າ ອ່າງແມ່ນ້ຳແຫ່ງນີ້ ຍັງສືບຕໍ່ປະສົບກັບ ສິ່ງທ້າທາຍທີ່ໃຫຍ່ຫຼວງ. ໃນຄວາມເປັນຈິງແລ້ວ, ໃນບົດປາໄສກ່ຽວກັບ ສະຖານະພາບຂອງແມ່ນ້ຳຂອງ ປະຈຳເດືອນເມສາ ເຊິ່ງກ່າວໂດຍ ທ່ານ ດຣ. ອານຸລັກ ກິດຕິຄຸນ, ຫົວໜ້າກອງເລຂາ ຄມສ ນັ້ນ ໄດ້ລະບຸເຖິງ 5 ທ່າອ່ຽງ "ທີ່ເປັນບັນຫາ" ຄື: ຮູບແບບການໄຫຼຂອງນ້ຳທີ່ປ່ຽນແປງໄປ, ຕະກອນທີ່ເປັນແຫຼ່ງທາດອາຫານ, ການບຸກລຸກຂອງນ້ຳເຄັມ, ມົນລະພິດຈາກປັດສະຕິກ ແລະ ໄພນ້ຳຖ້ວມແລະໄພແຫ້ງແລ້ງ ທີ່ຖືກຊ້ຳຕື່ມຈາກ ການປ່ຽນແປງສະພາບອາກາດ.

ດັ່ງທີ່ທ່ານ ອານຸລັກ ໄດ້ລະບຸໄວ້ໃນ ບົດລາຍງານປະຈຳປີສະບັບນີ້ວ່າ ສິ່ງທ້າທາຍເລົ່ານີ້ ແມ່ນມີລັກສະນະຂ້າມຊາຍແດນ, ສະນັ້ນຈຶ່ງຮຽກຮ້ອງໃຫ້ມີການຮ່ວມມືຢ່າງຕໍ່ເນື່ອງ ຈາກບັນດາປະເທດແຄມຝັ່ງນ້ຳຂອງ ເພື່ອຈັດການກັບພວກມັນ. ສິ່ງດັ່ງກ່າວມານີ້ ປະກອບດ້ວຍ ການແລກປ່ຽນຂໍ້ມູນ, ການເຈລະຈາ, ການຍອມຮັບ ແລະ ການເປີດກວ້າງສູ່ ບັນດາຄູ່ຮ່ວມງານ ທັງໃນລະດັບພາກພື້ນ ແລະ ລະດັບສາກົນ.

ທ່ານ ອານຸລັກ ໄດ້ຂຽນໄວ້ໃນບົດນຳ ວ່າ "ມີແມ່ນ້ຳຂອງໜຶ່ງດຽວ". "ສະນັ້ນແລ້ວ, ຖ້າເປັນໄປໄດ້ ພວກເຮົາຄວນນຳໃຊ້ ວິທີການໃນລະດັບອ່າງແມ່ນ້ຳ ເພື່ອຊອກຫາທາງອອກ ແລະ ເພື່ອການຕັດສິນໃຈ ສຳລັບທຸກສິ່ງທຸກຢ່າງ ນັບຈາກ ການອອກແບບເຂື່ອນພະລັງງານທາງນ້ຳ ແລະ ການຕິດຕາມແມ່ນ້ຳ ໄປຈົນເຖິງ ລະບຽບການເດີນເຮືອ ແລະ ໂຄງລ້າງພື້ນຖານຊົນລະປະທານ."

ຄມສ ເປັນອົງການລະຫວ່າງລັດຖະບານ ພຽງອົງການດຽວເທົ່ານັ້ນ ທີ່ໄດ້ຮັບມອບໝາຍຈາກ ສົນທິສັນຍາລະຫວ່າງປະເທດ ກໍ່ຄື ສັນຍາແມ່ນ້ຳຂອງສະບັບປີ 1995 ເພື່ອປົກປ້ອງແມ່ນ້ຳ; ຮັບປະກັນ ການໃຊ້ຊັບພະຍາກອນນ້ຳ ຢ່າງເທົ່າທຽມກັນ; ແລະ ຂະຫຍາຍການພັດທະນາເສດຖະກິດ, ພ້ອມທັງຫຼຸດຜ່ອນໄພອັນຕະລາຍ ຕໍ່ກັບສິ່ງແວດລ້ອມ ຫຼື ຊຸມຊົນແຄມຝັ່ງນ້ຳ ໂດຍສະເພາະແມ່ນ ຄອບຄົວຊາວປະມົງ ແລະ ຄອບຄົວຊາວກະສິກອນ ຫຼາຍລ້ານຄອບຄົວ ທີ່ເພິ່ງພາແມ່ນ້ຳແຫ່ງນີ້ ເພື່ອຫາອາຫານ ແລະ ເພື່ອການດຳລົງຊີວິດ.

ເຖິງແມ່ນວ່າ ໃນບາງຄັ້ງນັ້ນ ມັນເກີດມີຄວາມແຕກຕ່າງກັນ ລະຫວ່າງ ຜົນປະໂຫຍດຂອງປະເທດ ແລະ ສິ່ງທີ່ດີທີ່ສຸດ ສຳລັບພາກພື້ນນີ້ ກໍ່ຕາມ ແຕ່ວ່າ ຜົນໄດ້ຮັບທີ່ໄດ້ອະທິບາຍລະອຽດ ຢູ່ໃນບົດລາຍງານປະຈຳປີສະບັບນີ້ ສະແດງໃຫ້ເຫັນວ່າ ການຮ່ວມມືນັ້ນ ເຮັດໃຫ້ເກີດໝາກຜົນສູງສຸດ ແລະ ຈະສືບຕໍ່ເປັນເຊັ່ນນີ້ ໃນອະນາຄົດ ໂດຍອີງຕາມ ພະນັກງານຂັ້ນສູງຈາກປະເທດໄທ ທີ່ໄດ້ກ່າວໄວ້ ໃນບົດລາຍງານສະບັບນີ້.

"ມາຮອດປະຈຸບັນນີ້, ຄມສ ມີນະໂຍບາຍ ແລະ ລະບຽບການຕ່າງໆທີ່ໜັກແໜ້ນ ໃນການຈັດການກັບ ການຄຸ້ມຄອງນ້ຳຂ້າມຊາຍແດນ ໂດຍອີງຕາມ ຫຼັກການຂອງການຮ່ວມມື, ພັນທະຕາມສົນທິສັນຍາລະຫວ່າງປະເທດ ແລະ ຄວາມຈິງໃຈ," ກ່າວໂດຍທ່ານ ດຣ. ສຸຣະສີ ກິດຕິມົນທົນ, ສະມາຊິກຂອງ ຄະນະກຳມະການຮ່ວມຂອງ ຄມສ ຕາງໜ້າປະເທດໄທ ທັງເປັນເລຂາທິການ ສຳນັກງານຊັບພະຍາກອນນ້ຳແຫ່ງຊາດໄທ ແລະ ກອງເລຂາ ຄະນະກຳມະການແມ່ນ້ຳຂອງແຫ່ງຊາດໄທ.

**ຂໍ້ມູນສຳລັບບັນນາທິການຂ່າວ:**
ຄມສ ແມ່ນອົງການຈັດຕັ້ງ ລະຫວ່າງລັດຖະບານ ສ້າງຕັ້ງຂຶ້ນໃນປີ 1995 ເພື່ອສົ່ງເສີມ ການສົນທະນາ ແລະ ການຮ່ວມມື ໃນລະດັບພາກພື້ນ ໃນອ່າງແມ່ນ້ຳຂອງຕອນລຸ່ມ. ໂດຍອີງຕາມ ສັນຍາແມ່ນ້ຳຂອງ ລະຫວ່າງ ປະເທດກຳປູເຈຍ, ປະເທດລາວ, ປະເທດໄທ ແລະ ປະເທດຫວຽດນາມ, ຄມສ ເຮັດໜ້າທີ່ເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນສູນກາງຄວາມຮູ້ ເພື່ອຄຸ້ມຄອງຊັບພະຍາກອນນ້ຳ ແລະ ເພື່ອສະໜັບສະໜູນ ການພັດທະນາຢ່າງຍືນຍົງ ໃນພາກພື້ນນີ້.

**-ຈົບ-**

**ຖ້າຕ້ອງການຂໍ້ມູນເພີ້ມຕື່ມ, ກະລຸນາຕິດຕໍ່:**

ທ່ານ ໂສພຽກ ແມ, ຜູ້ຊ່ຽວຊານດ້ານ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ,
ຮັກສາການ ພະນັກງານປະຊາສຳພັນ
ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org | ມືຖື: +856-20-77779168

###